ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0022 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 26 OCT 2016

# ຂໍ້ຕົກລົງ
# ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0149/ສຄຄຊ ລົງວັນທີ 13 ຕຸລາ 2016.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ມາດຕະການ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ ເພື່ອຄຸ້ມຄອງວຽກງານການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ມີປະສິດທິພາບ ແນໃສ່ຮັບປະກັນເຮັດໃຫ້ການເຄື່ອນໄຫວວຽກງານການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີຄວາມເປັນລະບຽບຮຽບຮ້ອຍ, ຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ແມ່ນການລະດົມທຶນຂອງບໍລິສັດທີ່ສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຮຸ້ນກູ້** ໝາຍເຖິງ ການກູ້ຢືມຂອງບໍລິສັດ ຊຶ່ງຜູ້ຖືຮຸ້ນກູ້ ມີຖານະເປັນເຈົ້າໜີ້ ຈະໄດ້ຮັບການຊຳລະຄືນທັງຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້;

2. **ຮຸ້ນກູ້ປ່ຽນສະພາບ** ໝາຍເຖິງ ຮຸ້ນກູ້ທີ່ສາມາດປ່ຽນສະພາບເປັນຮຸ້ນຂອງ ບໍລິສັດ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້;
3. **ບໍລິສັດ** ໝາຍເຖິງ ບໍລິສັດຈົດທະບຽນ, ບໍລິສັດມະຫາຊົນ ແລະ ບໍລິສັດຈຳກັດ ຍົກເວັ້ນບໍລິສັດຈຳກັດຜູ້ດຽວ.

**ມາດຕາ 4 ຫຼັກການການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຕ້ອງໄດ້ຮັບໃບຢັ້ງຢືນການຮັບຮູ້ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຕ້ອງປະຕິບັດຕາມລະບຽບກົດໝາຍຂອງອົງການຄຸ້ມຄອງວຽກງານຫຼັກຊັບ ຂອງປະເທດທີ່ບໍລິສັດໄປອອກຈຳໜ່າຍຮຸ້ນກູ້;
3. ນຳໃຊ້ທຶນທີ່ລະດົມໄດ້ໃຫ້ຖືກຕ້ອງຕາມແຜນການ ແລະ ເປົ້າໝາຍຕາມທີ່ກຳນົດໄວ້ໃນໜັງສືຊວນຊື້;
4. ຕ້ອງຮັບຜິດຊອບຕໍ່ການຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ຜູ້ຖືຄອງຮຸ້ນກູ້ຕາມກຳນົດເວລາ;
5. ຕ້ອງປະຕິບັດພັນທະລາຍງານ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບໍລິສັດ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ທີ່ມີສ່ວນຮ່ວມກັບວຽກງານການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ.

## ໝວດທີ 2
## ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ

**ມາດຕາ 6 ເງື່ອນໄຂການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຮູບແບບບໍລິສັດ;
2. ສ້າງຕັ້ງຂຶ້ນຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ເຄື່ອນໄຫວດຳເນີນທຸລະກິດຢ່າງໜ້ອຍ ສາມປີຕໍ່ເນື່ອງ ຍົກເວັ້ນ ກໍລະນີບໍລິສັດມີການ ແຍກ, ຄວບ ຫຼື ຫັນເປັນບໍລິສັດຮູບແບບໃໝ່ ຈາກວິສາຫະກິດ ຫຼື ບໍລິສັດເດີມ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢ່າງໜ້ອຍສາມປີ;
3. ມີແຜນການລະດົມທຶນ ແລະ ແຜນການນຳໃຊ້ທຶນທີ່ລະດົມໄດ້ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ;
4. ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ສຳລັບ ບໍລິສັດຈົດທະບຽນ ແລະ ສາມປີຄືນຫຼັງ ສຳລັບ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ນັບແຕ່ວັນໄດ້ຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ໂດຍໄດ້ຮັບການກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. ມີກຳໄລ ໜຶ່ງປີຄືນຫຼັງ ສຳລັບບໍລິສັດຈົດທະບຽນ ແລະ ກຳໄລສະເລ່ຍສາມປີຄືນຫຼັງຕິດຕໍ່ກັນ ສຳລັບບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ນັບແຕ່ວັນທີ່ໄດ້ຍື່ນເອກະສານປະກອບການຂໍໃບຢັ້ງຢືນ ການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ພຽງພໍສຳລັບການຊຳລະດອກເບ້ຍຂອງຮຸ້ນກູ້ທັງໝົດ ໃນໜຶ່ງປີ ຕໍ່ໜ້າ;
6. ສຳລັບບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີລຳດັບຄວາມໜ້າເຊື່ອຖືບໍ່ຕ່ຳກວ່າ BBB;
7. ສຳລັບບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງ ມີປະຫວັດທີ່ດີໃນການຊຳລະ ຕົ້ນທຶນ, ດອກເບ້ຍ ແລະ ພາລະຜູກພັນທາງການເງິນອື່ນໆ ໃນໄລຍະສາມປີຄືນຫຼັງນັບແຕ່ວັນທີ່ໄດ້ຍື່ນເອກະສານປະກອບການຂໍໃບຢັ້ງຢືນ ການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

**ມາດຕາ 7 ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໃບທະບຽນການສຳປະທານ ກໍລະນີເປັນທຸລະກິດສຳປະທານ;
3. ສຳເນົາໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ;
4. ມະຕິຂອງກອງປະຊຸມຜູ້ຖືຮຸ້ນ ເຫັນດີໃຫ້ບໍລິສັດໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ;
5. ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ສຳລັບ ບໍລິສັດຈົດທະບຽນ ແລະ ສາມປີຄືນຫຼັງ ສຳລັບບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ນັບແຕ່ວັນໄດ້ຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ. ກໍລະນີ ຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ພາຍຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນ ປະຈຳຫົກເດືອນ ຕົ້ນປີ ໂດຍຜ່ານການທົບທວນ ຈາກບໍລິສັດກວດສອບ;
6. ແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ແຜນການຊຳລະ ຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການຊຳລະດັ່ງກ່າວ;
7. ຮ່າງໜັງສືຊວນຊື້ ຕາມການກຳນົດຂອງອົງການຄຸ້ມຄອງວຽກງານຫຼັກຊັບ ຂອງຕ່າງປະເທດ;
8. ບົດວິພາກໂຄງການ ແລະ ໃບອະນຸຍາດ ກ່ຽວກັບໂຄງການລົງທຶນ ຈາກລັດຖະບານ ທີ່ຈະນຳໃຊ້ແຫຼ່ງທຶນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ກໍລະນີ ທີ່ເປັນການລົງທຶນໃນໂຄງການຕ່າງໆ;
9. ໜັງສືຮັບຮູ້ ຈາກທະນາຄານແຫ່ງ ສປປ ລາວ ກ່ຽວກັບ ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ;
10. ບົດລາຍງານການຈັດລຳດັບຄວາມໜ້າເຊື່ອຖື (ສຳລັບບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ);
11. ເອກສານຢັ້ງຢືນປະຫວັດການຊຳລະ ຕົ້ນທຶນ, ດອກເບ້ຍ ແລະ ພາລະຜູກພັນທາງການເງິນອື່ນໆ ໃນໄລຍະສາມປີຄືນຫຼັງ (ສຳລັບບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ).

**ມາດຕາ 8 ການພິຈາລະນາການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາໃນການອອກໃບຢັ້ງຢືນການຮັບຮູ້ການອອກ ຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ພາຍໃນກໍານົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານປະກອບຂໍໃບຢັ້ງ ຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນເວລາ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພິຈາລະນາການອອກໃບຢັ້ງຢືນການຮັບຮູ້ກ່ຽວກັບ ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຫາກວ່າມີຄວາມຈໍາເປັນ ແມ່ນມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຈາກບໍລິສັດດັ່ງກ່າວໄດ້ ແລະ ມີສິດຮຽກໃຫ້ບໍລິສັດດັ່ງກ່າວເຂົ້າມາ ເພື່ອປຶກສາຫາລື.

**ມາດຕາ 9 ອາຍຸຂອງໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີອາຍຸ ໜຶ່ງປີ ນັບແຕ່ວັນໄດ້ອອກໃບຢັ້ງຢືນດັ່ງກ່າວ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ. ກໍລະນີ ບໍລິສັດ ບໍ່ສາມາດອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕາມກໍານົດເວລາດັ່ງກ່າວ ຖ້າຫາກມີຄວາມຕ້ອງການຈະສືບຕໍ່ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງປະກອບເອກະສານຕາມທີ່ກໍານົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອສະເໜີຂໍໃບຢັ້ງ ຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຄືນໃໝ່.

**ມາດຕາ 10 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ຕ້ອງເປີດເຜີຍຂໍ້ມູນ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງຕ່າງປະເທດ. ສໍາລັບ ບໍລິສັດຈົດທະບຽນ ຫາກອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຍັງຕ້ອງໄດ້ເປີດເຜີຍຂໍ້ມູນຕາມລະບຽບກົດໝາຍທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຂອງ ສປປ ລາວ.

**ມາດຕາ 11 ການລາຍງານຜົນການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ທີ່ໄດ້ອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງລາຍງານຜົນການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຢ່າງເປັນລາຍລັກອັກສອນ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນກໍານົດເວລາສິບວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈໍາໜ່າຍຮຸ້ນກູ້ ຢູ່ ຕ່າງປະເທດ ພ້ອມທັງສໍາເນົາ ໜັງສືຊວນຊື້, ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ສັນຍາຄໍ້າປະກັນການຊໍາລະໜີ້, ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ແລະ ສັນຍາການແຕ່ງຕັ້ງຕົວແທນການຊໍາລະເງິນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 12 ພັນທະຂອງບໍລິສັດອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ທີ່ອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງມີພັນທະ ດັ່ງນີ້:

1. ເສຍຄ່າທໍານຽມທີ່ກ່ຽວຂ້ອງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ນໍາໃຊ້ທຶນທີ່ລະດົມໄດ້ຖືກຕ້ອງຕາມແຜນການ ແລະ ເປົ້າໝາຍທີ່ກໍານົດໄວ້ໃນໜັງສືຊວນຊື້;
3. ລາຍງານກ່ຽວກັບ ການນໍາໃຊ້ທຶນທີ່ລະດົມໄດ້, ການຊໍາລະຕົ້ນທຶນ ແລະ ດອກເບ້ຍ, ຄວາມຄືບໜ້າ ແລະ ຜົນການດໍາເນີນງານ ຂອງໂຄງການ ຫຼື ກິດຈະການທີ່ລົງທຶນ ຕໍ່ ສໍານັກງານຄະນະກໍາມະການຄຸ້ມ

ຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດໄຕມາດ ຈົນກວ່າຄົບກຳນົດອາຍຸການໄຖ່ຖອນຮຸ້ນກູ້ ແລະ ນຳໃຊ້ທຶນທີ່ລະດົມໄດ້ໝົດ;

4. ລາຍງານກ່ຽວກັບ ເປົ້າໝາຍການນຳໃຊ້ທຶນໃໝ່ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສິບວັນລັດຖະການ ໃນກໍລະນີ ທີ່ມີການປ່ຽນແປງເປົ້າໝາຍການນຳໃຊ້ທຶນທີ່ລະດົມໄດ້ ຍົກເວັ້ນ ບໍລິສັດຈົດທະບຽນ.

**ມາດຕາ 13 ຄ່າທຳນຽມການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ຕ້ອງປະຕິບັດພັນທະຄ່າທຳນຽມໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ ສິບຫ້າລ້ານກີບ (15.000.000 ກີບ) ແລະ ຕ້ອງຊຳລະເງິນພາຍໃນວັນທີ່ຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຄ່າໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນກູ້ທັງໝົດທີ່ອອກຈຳໜ່າຍໃນແຕ່ລະຄັ້ງ ແຕ່ບໍ່ໃຫ້ຕ່ຳກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊຳລະເງິນພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສຳເລັດການອອກຈຳໜ່າຍຮຸ້ນກູ້ ຢູ່ ຕ່າງປະເທດ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ ສິບລ້ານກີບ (10.000.000 ກີບ) ຕາມອາຍຸຂອງຮຸ້ນກູ້ ແລະ ຕ້ອງຊຳລະເງິນພາຍໃນໄຕມາດທີໜຶ່ງຂອງປີຖັດໄປ.

ສຳລັບຄ່າຄຸ້ມຄອງປະຈຳປີຂອງ ບໍລິສັດອອກຈຳໜ່າຍຮຸ້ນກູ້ ທີ່ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແມ່ນຖືກຍົກເວັ້ນ.

**ມາດຕາ 14 ຂໍ້ຫ້າມ**

ຫ້າມບໍລິສັດ ມີພຶດຕິກຳໃດໜຶ່ງບໍ່ວ່າທາງກົງ ແລະ ທາງອ້ອມ ດັ່ງນີ້:

1. ອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບໃບຢັ້ງຢືນການຮັບຮູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໂດຍການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ມີການຕົວະຂໍ້ມູນໃນທຸກຮູບແບບ;
3. ອອກຈຳໜ່າຍຮຸ້ນກູ້ປ່ຽນສະພາບຢູ່ຕ່າງປະເທດ;
4. ມີພຶດຕິກຳອື່ນ ທີ່ຂັດກັບການກຳນົດຂອງລະບຽບກົດໝາຍກ່ຽວຂ້ອງ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດໄປອອກຈຳໜ່າຍຮຸ້ນກູ້, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 16 ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດທີ່ໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ບໍລິສັດທີ່ໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບໃບຢັ້ງຢືນການຮັບຮູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ສາມສ່ວນຮ້ອຍຂອງທຶນທີ່ລະດົມໄດ້ ແລະ ຜູ້ມີສ່ວນກ່ຽວ ຂ້ອງໂດຍກົງ ຈະຖືກປັບໃໝ ຫ້າສິບລ້ານ ຫາ ຮ້ອຍລ້ານກີບ;
2. ບໍລິສັດທີ່ໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ມີການຕົວະຂໍ້ມູນໃນທຸກຮູບແບບ ຈະຖືກປັບໃໝ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ ໃນກໍລະນີທີ່ຍັງບໍ່ທັນໄດ້ອອກຈຳໜ່າຍຮຸ້ນກູ້ ຫຼື ຈະຖືກປັບໃໝ ສາມສ່ວນຮ້ອຍ ຂອງເງິນທີ່ລະດົມໄດ້ ໃນກໍລະນີທີ່ໄດ້ອອກຈຳໜ່າຍຮຸ້ນກູ້ແລ້ວ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ຫ້າສິບລ້ານ ຫາ ຮ້ອຍລ້ານກີບ;
3. ບໍລິສັດໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຫາກລະເມີດຂໍ້ຕົກລົງສະບັບນີ້ ຍົກເວັ້ນ ຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້ ຈະຖືກປັບໃໝ ສາມສິບລ້ານ ຫາ ຫ້າສິບລ້ານກີບ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ, ບໍລິສັດອອກຈຳໜ່າຍຮຸ້ນກູ້, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫາວັນ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ສົມດີ ດວງດີ